# ຂໍ້ມູນທີ່ທ່ານຕ້ອງການ ເພື່ອໃຫ້ທ່ານໄດ້ມີຊີວິດຢ່າງທີ່ທ່ານຕ້ອງການ.

ບາງຄັ້ງສະຖານະການປ່ຽນແປງຢ່າງໄວວາ, ທ່ານບໍ່ຮູ້ວ່າຈະເລີ່ມຕົ້ນບ່ອນໃດ. ຫຼືວ່າທ່ານອາດຈະໄດ້ຄວາມເຫັນມາຫຼາຍເກີນໄປ, ຈົນທ່ານບໍ່ແນ່ໃຈວ່າທ່ານຈະໄວ້ວາງໃຈຄວາມເຫັນຂອງໃຜດີ.

---

## *ໃຫ້ມາເລີ່ມຕົ້ນທີສູນຊັບພະຍາກອນ ສຳລັບຜູ້ສູງອາຍຸແລະຄົນພິການ*

---

ຫ້ອງການຂອງພວກເຮົາຍິນດີຕ້ອນຮັບ ແລະຈະໃຫ້ຄຳຕອບຢ່າງບໍ່ມີຄວາມລຳອຽງ ກັບທຸກຄຳຖາມກ່ຽວກັບການແກ່ເຖົ້າ ຫຼືການໃຊ້ຊີວິດກັບຄວາມພິການ ພວກເຮົາບໍ່ໄດ້ຂາຍຫຍັງ. ພວກເຮົາບໍ່ໄດ້ມີຄວາມພົວພັນກັບບໍລິສັດຫຼືຜະລິດຕະພັນຫຍັງ. ພວກເຮົາພຽງຊ່ວຍເຫຼືອຊາວ **Wisconsin** ໃຫ້ຢູ່ໄດ້ດ້ວຍຕົນເອງເທົ່ານັ້ນ ໂດຍພວກເຮົາຊ່ວຍທ່ານໂດຍການເຊື່ອມຕໍ່ທ່ານກັບແຫຼ່ງຊັບພະຍາກອນທີ່ທ່ານຕ້ອງການ.

ຊີວິດທີ່ດີທີ່ສຸດຂອງທ່ານເລີ່ມຕົ້ນດ້ວຍຂໍ້ມູນທີ່ຖືກຕ້ອງ. ຊອກຫາຊອກຫາໄດ້ຢູ່ນີ້, ຢູ່ສູນຊັບພະຍາກອນສຳລັບຜູ້ເຖົ້າແລະຄົນພິການຂອງທ່ານ.

## ໄດ້ຄຳຕອບແລະແຫຼ່ງຊັບພະຍາກອນທີ່ທ່ານຕ້ອງການ.

## ໄປຢ້ຽມຢາມຫຼືຕິດຕໍ່ ADRC ຂອງທ່ານເລີຍ.

*ການໃຫ້ຄວາມສະດວກດ້ານສະຖານທີ່, ເອກະສານຂໍ້ມູນໃນຮູບແບບອື່ນໆ ແລະການນັດຫມາຍພາຍຫຼັງຊົ່ວໂມງເຮັດວຽກມີໃຫ້ຖ້າທ່ານຮ້ອງຂໍ. ເຄື່ອງຊ່ວຍຟັງມີໃຫ້ຢູ່ໃນສະຖານທີ່ນັ້ນ; ກະລຸນາໂທຫາເພື່ອຈັດແຈງໃຫ້ມີນາຍພາສາຫຼືຜູ້ໃຫ້ຄຳບັນຍາຍ.*

**FindMyADRC.org**

ADRC Aging & Disability Resource Center

WISCONSIN DEPARTMENT *of* HEALTH SERVICES

P-00122-L (07/2018)

ADRC Aging & Disability Resource Center

# ຜູ້ທີ່ຢູ່ໄດ້ດ້ວຍຕົວເອງ ເຊັ່ນທ່ານ.

ຂໍ້ມູນທີ່ບໍ່ມີຄວາມລຳອຽງ ເພື່ອຊ່ວຍທ່ານໃຫ້ສາມາດໃຊ້ຊີວິດໄດ້ຢ່າງທີ່ທ່ານຕ້ອງການ.



# ທຸກຢ່າງກ່ຽວກັບຄວາມແກ່ເຖົ້າແລະຄວາມພິການ (Aging and Disability Resource Centers)

## ສູນຊັບພະຍາກອນສຳລັບຜູ້ສູງອາຍຸແລະຄົນພິການແມ່ນຫຍັງ (ADRCs)?

ADRC ໃຫ້ຂໍ້ມູນທີ່ບໍ່ມີຄວາມລຳອຽງແລະກ່ຽວຂ້ອງກັບຄວາມແກ່ເຖົ້າເກົ່າ ຫຼືການໃຊ້ຊີວິດກັບຄວາມພິການກັບຊາວ Wisconsin. ເປົ້າຫມາຍແມ່ນເພື່ອຊ່ວຍໃຫ້ປະຊາຊົນຮັກສາຄວາມສາມາດໃຫ້ຢູ່ໄດ້ດ້ວຍຕົວເອງໂດຍໃຫ້ເຊື່ອມຕໍ່ກັບແຫຼ່ງຊັບພະຍາກອນທີ່ເຫມາະສົມ.

## ພວກເຂົາເຈົ້າຊ່ວຍເຫຼືອໃຜແດ່?

ADRC ຊ່ວຍເຫຼືອຜູ້ສູງອາຍຸແລະຄົນພິການ, ລວມທັງ ຄອບຄົວ, ຫມູ່ເພື່ອນແລະຜູ້ດູແລທີ່ເຮັດວຽກຢູ່ນຳແລະດູແລພວກເຂົາເຈົ້າ.

## ຕ້ອງເສຍຄ່າບໍລິການ ADRC ເທົ່າໃດ?

ຂໍ້ມູນທີ່ສະຫນອງໃຫ້ຢູ່ ADRC ແມ່ນຂໍ້ມູນຟຣີໃຫ້ແກ່ຊາວ Wisconsin.

## ຂ້າພະເຈົ້າຈະຊອກຫາ ADRC ໃນທ້ອງຖິ່ນຂອງຂ້າພະເຈົ້າໄດ້ຢູ່ໃສ?

ADRC ຊ່ວຍເຫຼືອຢູ່ໃນທຸກໆຄາວຕີ້ແລະທຸກໆ ຊົນເຜົ່າໃນ Wisconsin. ເພື່ອຊອກຫາ ADRC ທີ່ຢູ່ໃກ້ທ່ານ, ໄປເບິ່ງທີ່ FindMyADRC.org.



## ຊັບພະຍາກອນປະເພດໃດແດ່ທີ່ ADRCs ສາມາດໃຫ້ໄດ້?

- ການດູແລແລະພະຍາບານສ່ວນບຸກຄົນຢູ່ເຮືອນ
- ຕົວເລືອກເລື່ອງທີ່ຢູ່ອາໄສ
- ບໍລິການເຮັດຄວາມສະອາດເຮືອນແລະວຽກກ່ຽວກັບເຮືອນ
- ການດັດແປງເຮືອນ
- ອຸປະກອນທີ່ຊ່ວຍໃນການໃຊ້ຊີວິດ
- ການເດີນທາງ
- ສຸຂະພາບ, ໂພຊະນາການ, ແລະໂຄງການສົ່ງອາຫານໃຫ້ທີບ້ານ
- Medicare, Medicaid, ແລະ Social Security
- ຄວາມຊ່ວຍເຫຼືອຈາກຜູ້ດູແລແລະການພັກຜ່ອນ